## ບົດທີ 12

# ການອັດສະຈັນແລະການໃຫ້ຄົນດີພະຍາດ




**1** ໃຫ້ອ່ານ ກຈກ 3:1-10

ກ. ເປໂຕກັບໂຢຮັນເຫັນໃຜຢູ່ຮິມປະຕູບໍລິເວນພະວິຫານ? ____________________

ຂ. ເຂົາບໍ່ມີເງິນຄຳຈະໃຫ້ ແຕ່ເຂົາມີອັນທີ່ມີຄຸນຄ່າຫຼາຍກວ່າທີ່ຈະໃຫ້.
ເຂົາໃຫ້ດີໃນນາມຂອງໃຜ? ____________________________________

ຄ. ຄົນທີ່ເສັຍງ່ອຍມາກ່ອນ ໂດດຍືນຂຶ້ນແລ້ວເຂົ້າໄປໃສ? (ຂໍ້ 8) ________________

ງ. ຍ່າງແລະເຕັ້ນພ້ອມສັນລະເສີນໃຜ? ________________________________

**2** ໃຫ້ອ່ານ ກຈກ 5:12-16 ຕາມຂໍ້ພະຄຳພີເຫຼົ່ານັ້ນ ລັກສະນະຂອງຄຣິດສະຕະຈັກໃນສະໄໝອັກຄະສາວົກເປັນຢ່າງໃດ? (ເລືອກ)

ກ. ______ ຈຳນວນຄົນຄຣິດສະຕຽນເພີ້ມຂຶ້ນຫຼາຍ

ຂ. ______ ມີຄວາມເຊື່ອນ້ອຍ

ຄ. ______ ໂຕ້ວາທີກັນແລະຖົກຖຽງກັນຫຼາຍ

ງ. ______ ລົ້ມເຫຼວຫຼາຍ

ຈ. ______ ຫຼາຍຄົນດີພະຍາດ

ສ. ______ ມີ ໝາຍສຳຄັນແລະອັດສະຈັນຫຼາຍ

*ບົດຮຽນນີ້ຈະກ່າວເລື່ອງການອັດສະຈັນໃນສະໄໝເຢຊູ ໃນສະໄໝອັກຄະສາວົກ ແລະໃນສະໄໝນີ້ດ້ວຍ.*

**3** ເຖິງວ່າພະເຢຊູສະເດັດຂຶ້ນໄປສະຫວັນແລ້ວກໍຕາມ ແຕ່ລິດເດດຂອງພະອົງບໍ່ໄດ້ລົດລົງ. ຂໍ້ພະຄຳພີໃດຕໍ່ໄປນີ້ກ່າວ ເຖິງລິດເດດນັ້ນ?

ກ. ______ ກຈກ 8:7 ຂ. ______ ກຈກ 8:34

ຄ. ______ ກຈກ 16:18 ງ. ______ ກຈກ 19:11-12

**4** ໃນ ກຈກ 3:1-10 ທີ່ທ່ານອ່ານມາແລ້ວ

ກ. ແມ່ນໃຜທີ່ດີພະຍາດມາ? ____________________________________________

ຂ. ໃນ ກຈກ 4:10 ເປໂຕບອກວ່າຄົນນັ້ນດີມາໂດຍອຳນາດໃຜ? __________________

ຄ. ໃນ ກຈກ 4:30 ພວກຄຣິດສະຕຽນໃນສະໄໝນັ້ນ ເຫັນວ່າໝາຍສຳຄັນແລະການອັດສະຈັນບັງເກີດຂຶ້ນມາໂດຍພະ ນາມໃດ? ______________________________________

ງ. ໃນ ກຈກ 8:5 ຟີລິບ ປະກາດເລື່ອງໃຜໃນແຂວງຊາມາເລຍຈຶ່ງມີຫຼາຍຄົນດີພະຍາດ?

______________________________________________________________

**5** ໃຫ້ທ່ານອ່ານ ກຈກ 3:12-15 ແລ້ວໝາຍ ຂໍ້ໃດທີ່ຖືກກວ່າ.

ກ. ______ ພວກສາວົກກ່າວວ່າອຳນາດເຮັດການອັດສະຈັນມາຈາກພະເຢຊູ.

ຂ. ______ ພວກສາວົກກ່າວວ່າອຳນາດເຮັດການອັດສະຈັນຢູ່ກັບເຂົາເອງ.

ຄ. ______ ພວກສາວົກກ່າວວ່າອຳນາດນັ້ນມາຈາກວິຊາ.

**6** ພະເຢຊູເອງເປັນຕົວຢ່າງຕໍ່ພວກສາວົກໃນເມື່ອກະທຳການອັດສະຈັນ. ໃຫ້ອ່ານ ມັດທາຍ 12:16 ຫຼັງຈາກພະອົງ ຊົງ ໂຜດໃຫ້ເຂົາດີພະຍາດ ພະອົງສັ່ງໃຫ້ເຂົາເຜີຍເລື່ອງບໍ່? ________

**7** ເຊັ່ນດຽວກັນ ໃນເມື່ອພະເຢຊູຖືກທົດລອງຢູ່ຫຼັງຄາພະວິຫານ ພະອົງປະຕິເສດບໍ່ຊອກຫາຫຍັງ? (ເລືອກຂໍ້ດຽວ)

ກ. ______ ບໍ່ຊອກຫາກຽດ

ຂ. ______ ບໍ່ຊອກຫາອາຫານ

ຄ. ______ ບໍ່ຊອກຫາລູກແກະ

*ໃຫ້ທ່ານຮັບພິຈາລະນາວ່າ ພະເຢຊູບໍ່ຊອກຫາກຽດ ທັງພວກສາວົກກໍບໍ່ຊອກຫາເໝືອນກັນ. ເປັນຫຍັງພະເຈົ້າໃຫ້ເຂົາມີລິດເດດເຮັດການອັດສະຈັນນັ້ນ? (ບໍ່ຕ້ອງຕອບ)*

**8** ກ. ໃຫ້ສັງເກດດີ ໆ ວ່າ ແມ່ນພວກໃດທີ່ຮັບຄຸນປະໂຫຍດການອັດສະຈັນເຫຼົ່ານັ້ນ. (ເລືອກ)

______ ຄົນມີແຮງ

______ ຄົນທຸກ

______ ຄົນສຸກ

ຂ. ຄົນງ່ອຍທີ່ເປໂຕກັບໂຢຮັນໂຜດໃຫ້ດີເປັນຄົນຢ່າງໃດ? (ເລືອກ)

_________ ຄົນມີແຮງ

_________ ຄົນທຸກ

_________ ຄົນສຸກ



**9** ໃຫ້ອ່ານມັດທາຍ 15:32 ແມ່ນໃຜທີ່ສົງສານຄົນທີ່ບໍ່ມີອາຫານກິນນັ້ນ? _______________

*ທີ່ພະເຢຊູສົງສານເຂົາ ສະແດງວ່າພະອົງຮັກເຂົາ.*

**10** ທີ່ພະອົງສົງສານຄົນທີ່ຂາດສິ່ງໜຶ່ງສິ່ງໃດ ສະແດງວ່າພະອົງມີຄວາມ ________ ຕໍ່ເຂົາ. (ຕື່ມ)

**11** ການອັດສະຈັນທີ່ພະເຢຊູກະທຳຊ່ວຍຄົນ ສະແດງເຖິງຄວາມຮັກຂອງໃຜ? ____________

**12** ທີ່ຈິງຄວາມຕ້ອງການຝ່າຍວິນຍານໜັກກວ່າຄວາມຕ້ອງການຝ່າຍຮ່າງກາຍ.

ກ. ໃນມັດທາຍ 9:2 ພະເຢຊູເຫັນເຂົາເອົາຄົນເປ້ຍມາ ພະເຢຊູປົວຈິດກ່ອນຫຼືປົວກາຍກ່ອນ?

______________________________________________________________

ຂ. ຂໍ້ພະຄຳພີທີ່ເປັນຫຼັກຖານວ່າພະເຢຊູເນັ້ນຄວາມທຸກດ້ານວິນຍານຫຼາຍກວ່າຄວາມທຸກດ້ານຮ່າງກາຍ ຢູ່ໃນພະທຳມັດທາຍບົດແລະຂໍ້ໃດ? ______________________________

**13** ໃນເມື່ອຄົນງ່ອຍດີພະຍາດ ຫຼາຍຄົນມາໂຮມຟັງຄຳເທດສະໜາຂອງເປໂຕແລະໂຢຮັນ.

ກ. ໃນ ກຈກ 3:19 ເປໂຕຮ້ອງຜູ້ຟັງເຮັດຫຍັງ? (ເລືອກ)

_____ ມາໃຫ້ດີພະຍາດ _____ ມາສູດ _____ ມາຖິ້ມໃຈເກົ່າເອົາໃຈໃໝ່

ຂ. ພວກສາວົກເຫັນວ່າຈິດວິນຍານຫຼືຮ່າງກາຍສຳຄັນ? __________________________

ຄ. ໃຫ້ທ່ານຍົກຕົວຢ່າງຈາກປະຫວັດຂອງພະເຢຊູທີ່ສະແດງໃຫ້ເຫັນວ່າ ພະອົງຈະປົວຈິດວິນຍານກ່ອນຮ່າງ ກາຍ. ______________________________________________

**14** ເຖິງວ່າພະອົງຈະປົວຈິດຫຼືປົວກາຍກໍດີ ທັງສອງສະແດງວ່າ ພະອົງຊົງ _______ ມະນຸດ. (ຕື່ມ)

**15** ການ ອັດສະຈັນຂອງພະເຢຊູສະແດງທັງຄວາມຮັກແລະຫຍັງອີກ? (ເລືອກຂໍ້ດຽວ)

_____ ລິດເດດ _____ ຍຸດຕິທຳ _____ ປັນຍາ

**16** ໃນເມື່ອເຫັນພະເຢຊູໂຜດຄົນເປ້ຍ ປະຊາຊົນສັນລະເສີນໃຜ? _____________________

**17** ການອັດສະຈັນຕ່າງ ໆ ໃນພະຄຳພີເດີມສະແດງໃຫ້ເຫັນຫຍັງ? (ຕື່ມຄວາມທີ່ຂາດ)

ກ. ຄວາມ _____________ ຂອງ ____________________________________

ຂ. ລິດ _______________ ຂອງ ____________________________________

**18** ການອັດສະຈັນເຫຼົ່ານັ້ນ ສະແດງໃຫ້ເຫັນອີກປະການໜຶ່ງ. ໃຫ້ອ່ານ ມາລະໂກ 16:20 ໝາຍສຳຄັນຢືນຢັນແລະເກີດ ຂຶ້ນພ້ອມຫຍັງ? (ເລືອກ)

ກ. ຄຳຕົວະ ຂ. ສິ່ງທີ່ເປັນຕາຊັງ ຄ. ຄຳປະກາດພະທຳ

**19** ໝາຍສຳຄັນໃນພະຄຳພີໃໝ່ສະແດງເຖິງຄວາມຈິງ 3 ປະການໃດ? (ຕື່ມຄວາມທີ່ຂາດ)

ກ. ___________________ ຂອງ ____________________________________

ຂ. ___________________ ຂອງ ____________________________________

ຄ. ຢືນຢັນ ____________________________________________________

**20** ມີຢູ່ບາງເທື່ອທີ່ພະເຢຊູບໍ່ໄດ້ກະທຳການອັດສະຈັນ.

ກ. ໃນ ມັດທາຍ 13:58 ເປັນຫຍັງພະເຢຊູບໍ່ໄດ້ກະທຳການອິດທິລິດຫຼາຍໃນບ້ານນາຊາເລັດ?

______________________________________________________________

ຂ. ໃນ ມັດທາຍ 17:19-20 ເປັນຫຍັງພວກສາວົກຂອງພະອົງຂັບໄລ່ຜີອອກບໍ່ໄດ້?

______________________________________________________________

**21** ເຫັນວ່າພະເຢຊູບໍ່ໄດ້ກະທຳການອັດສະຈັນໃນເມື່ອຄົນຂາດຫຍັງ? ________________

**22** ເທື່ອໃດທີ່ບໍ່ຈຳເປັນ ພະເຢຊູບໍ່ໄດ້ກະທຳການອັດສະຈັນ.

ກ. ໃຫ້ອ່ານ ໂຢຮັນ 11:39-41 ພະເຢຊູຍົກຫີນອອກໂດຍລິດເດດຫຼືໃຫ້ຄົນຍົກອອກ? ____

ຂ. ໃນ ໂຢຮັນ 11:44 ໃຜແກ້ຜ້າໄປ? ________________________________

ຄ. ແຕ່ສ່ວນສິ່ງທີ່ມະນຸດກະທຳບໍ່ໄດ້ຄືຍົກລາຊະໂລຄືນມາຈາກຕາຍ ແມ່ນໃຜຍົກມາ? ____

**23** ກ. ພະເຢຊູບໍ່ໄດ້ກະທຳການອັດສະຈັນໃນເມື່ອຄົນຂາດຫຍັງ? __________________

ຂ. ແລະພະເຢຊູບໍ່ໄດ້ກະທຳການອັດສະຈັນໃນເທື່ອໃດອີກ? ____________________

**24** ໃນມັດທາຍ 9:2 ເຫັນໃຜທີ່ມີຄວາມເຊື່ອ? (ເລືອກ)

ກ. ______ ຄົນທີ່ຫາມຄົນເປ້ຍມາ

ຂ. ______ ພວກນັກທຳ

ຄ. ______ ເປໂຕ

**25** ອັດສະຈັນແລະໝາຍສຳຄັນໃນສະໄໝພະຄຳພີໃໝ່ສະແດງຫຍັງ?

ກ. ____________________________________________________________

ຂ. ____________________________________________________________

ຄ. ____________________________________________________________

**26** ມີຄຳແນະນຳຢ່າງສະເພາະໃນພະຄຳພີໃໝ່ກ່ຽວກັບຄຳອ້ອນວອນເພື່ອຄົນເຈັບປ່ວຍ. ໃຫ້ທ່ານເປີດເບິ່ງຢາໂກໂບ 5:14 ແລ້ວຕື່ມຄວາມທີ່ຂາດຕໍ່ໄປນີ້:

ມີຜູ້ໃດ _________________ ຫຼື ຈົ່ງໃຫ້ຜູ້ນັ້ນເຊີນບັນດາ _______________ ໃນ ຄຼິດສະຕະຈັກມາ ____________ ສຳລັບຕົນ ແລະເອົາ _______________ ທາຜູ້ນັ້ນ ໃນນາມຂອງ ________________________________________________

**27** ທ່ານຮຽນຮູ້ຢູ່ແລ້ວວ່າ ນ້ຳມັນເປັນສັນຍາລັກອັນໜຶ່ງທີ່ປຽບທຽບພະວິນຍານບໍລິສຸດ. ໃນການອ້ອນວອນເພື່ອຄົນເຈັບ ນ້ຳມັນນັ້ນຈະໝາຍເຖິງຫຍັງ? (ເລືອກ)

ກ. ______ ການທົດລິງຕັ້ງກະສັດ

ຂ. ______ ພະວິນຍານສະຖິດຢູ່ນຳ

ຄ. ______ ປຽບເຖິງສິ່ງທີ່ເປື້ອນເປິ

**28** ໃຫ້ອ່ານ ຢາໂປໂບ 5:15-16 ໃນຂໍ້ 16 ນັ້ນມີເງື່ອນໄຂສອງປະການໃດກ່ອນຈະໄດ້ດີພະຍາດ? (ຕື່ມຄວາມ)

ກ. ຈົ່ງ ______________________________________________ ຕໍ່ກັນແລະກັນ

ຂ. ຈົ່ງ ____________________________________________ ເພື່ອກັນແລະກັນ

*ທ່ານໄດ້ຮຽນຮູ້ມາແລ້ວວ່າ ພະຍາດບາງຢ່າງເກີດມາຈາກບັນຫາຈິດໃຈແລະປະສາດ. ເພາະສະນັ້ນການສາລະພາບຜິດບາບມີສ່ວນໃນການດີພະຍາດ.*

**29** ຄົນເຈັບແລະຜູ້ທີ່ມາອ້ອນວອນເພື່ອຄົນເຈັບ ເຫັນສັນຍາລັກຂອງພະວິນຍານບໍລິສຸດເພື່ອໃຫ້ມີຄວາມເຊື່ອຍິ່ງຂຶ້ນ. ສັນ ຍາລັກຂອງພະວິນຍານໃນເມື່ອຈະອ້ອນວອນເພື່ອຄົນເຈັບຄືຫຍັງ?

______________________________________________

**30** ບົດແລະຂໍ້ໃດໃນພະຄຳພີສອນໃຫ້ເອົານ້ຳມັນທາຄົນເຈັບໃນເມື່ອຈະອ້ອນວອນ? ________

| ໃຫ້ທ່ານເອົາສໍສີຂຽວຂີດອ້ອມ ຢາໂກໂບ 5:14 ໃນພະຄຳພີ |
|---|

**31** ມີເງື່ອນໄຂສອງປະການໃດໃນເມື່ອຈະເອົານ້ຳມັນທາຄົນເຈັບໃຫ້ດີພະຍາດ?

ກ. ______________________________________________

ຂ. ______________________________________________

*ໃນທຸກວັນນີ້ ມີຫຼາຍຄົນທີ່ສຸກຂະພາບບໍ່ດີ ທັງໃນຮ່າງກາຍແລະຈິດໃຈດ້ວຍ. ພາລະຂອງຄຣິດສະຕຽນກໍຄືທີ່ຈະອົບຮົມ ຄົນທີ່ຕ້ອງການ. ຖ້າຢ່າງນັ້ນມີຈຸດສຳຄັນທີ່ຄວນສັງເກດກ່ອນ*

**32** ກ. ຈິ່ງເຮັດຫຍັງກັນແລະກັນ? (ສອງປະການ)

____________________ ____________________

ຂ. ຄຳອ້ອນວອນນັ້ນຈະຕ້ອງປະກອບດ້ວຍຫຍັງ? (ຂໍ້ 15) ____________________

**33** ມີຢູ່ບາງເທື່ອທີ່ຈະບໍ່ເຫັນມີການອັດສະຈັນ. (ຕື່ມຄວາມຂາດ)

ກ. ເພາະຄົນເຫຼົ່ານັ້ນອາດຈະຂາດບໍ່ມີ ____________________

ຂ. ອາດຈະບໍ່ແມ່ນສິ່ງທີ່ ____________________

**34** ກ. ເທື່ອໃດທີ່ເຫັນການອັດສະຈັນພວກສາວົກສັນລະເສີນໃຜ? ____________________

ຂ. ຖ້າຄຣິດສະຕຽນໃນສະໄໝນີ້ ເຫັນການອັດສະຈັນຄົນຄວນຈະສັນລະເສີນໃຜ? ________

ຄ. ຖ້າຄຣິດສະຕຽນຄົນໃດຮັບກຽດເອົາເອງ ມີການອັນຕະລາຍຢ່າງໃດ? ______________

______________________________________________

______________________________________________

**35** ໝາຍສຳຄັນແລະການອັດສະຈັນໃນສະໄໝພະຄຳພີໃໝ່ສະແດງຫຍັງ?

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

**36** ໝາຍສຳຄັນແລະອັດສະຈັນໃນສະໄໝນີ້ສະແດງຫຍັງ?

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

**37** ຖ້າວ່າເຮົາອ້ອນວອນເພື່ອຄົນເປັນພະຍາດໃນປະຈຸບັນນີ້ ແຕ່ບໍ່ເຫັນເພິ່ນດີຂຶ້ນມາ ຄວນເຮັດຫຍັງ? ______________________________________________

______________________________________________

______________________________________________

## ໃຫ້ທ່ານຮັບພິຈາລະນາໃນເລື່ອງຕໍ່ໄປນີ້ກ່ອນປະຊຸມຂ້າງໜ້າ.

- *ໃນເມື່ອເຮົາອ້ອນວອນເພື່ອຄົນພະຍາດໃຫ້ດີ ຄຳອ້ອນວອນນັ້ນຄວນເຮັດຢ່າງໃດ? (ຢາໂກໂບ 1:6-7 ແລະ 1 ໂຢຮັນ 5:14-15)*
- *ຖ້າຈະຮັບສາລະພາບຜິດບາບກ່ອນອ້ອນວອນເພື່ອຄົນເຈັບ ແມ່ນແຕ່ຄົນເຈັບສາລະພາບຫຼືຈະສາລະພາບທຸກຄົນທີ່ ເຂົ້າຮ່ວມ?*
- *ຈະເຮັດຢ່າງໃດໃຫ້ຄວາມເຊື່ອແຂງແຮງຂຶ້ນໃນດ້ານການອ້ອນວອນເພື່ອຄົນເຈັບ?*
- *ໃນທຸກວັນນີ້ ເຮົາຄວນອ້ອນວອນເພື່ອຄົນພະຍາດເໝືອນໃນສະໄໝພະຄຳພີບໍ່? ແມ່ນຜູ້ໃດທີ່ຈະລົງມືເຮັດ? ເປັນອັນດຽວກັບການວາງມືບໍ່?*
- *ເຫັນວ່າ ໃນສະໄໝພະຄຳພີ ພະເຈົ້າໃຊ້ລິດເດດໃນການລ້ຽງຄົນທີ່ບໍ່ມີຂອງກິນ. ຖ້າຢ່າງນັ້ນເຮົາຄວນເລີກບໍ່ເ ຮັດໄຮ່ບໍ່ເຮັດນາບໍ່? ທີ່ພະເຢຊູເຄີຍປິ່ນປົວຮັກສາຄົນເຈັບໃຫ້ດີມາ ການນັ້ນຈະສະແດງວ່າເຮົາບໍ່ຄວນໄປຫາໝໍຈັກເທື່ອບໍ່? ບໍ່ຄວນກິນຢາບໍ່? (ໃຫ້ເບິ່ງ 1 ຕມທ 5:23)*

*ໃຫ້ເປີດເສັງບົດທີ 12!*

**ຄຳຕອບ:**

**1** *ກ. ຄົນງ່ອຍຂໍທານ ຂ. ພະເຢຊູ ຄ. ບໍລິເວນພະວິຫານ ງ. ພະເຈົາ*

**2** *ກ ຈ ສ ຖືກ*

**3** *ຖືກ ໝົດ*

**4** *ກ. ຄົນງ່ອຍ ຂ. ພະເຢຊູ ຄ. ຂອງພະເຢຊູ ງ. ປະກາດເລື່ອງພະເຢຊູຄຼິດ*

**5** *ກ ຖືກ*

**6** *ບໍ່*

**7** *ກ ຖືກ*

**8** *ກ. ຄົນທຸກ ຂ. ຄົນທຸກ*

**9** *ພະເຢຊູ*

**10** *ຮັກ*

**ຄຳຕອບ (ຕໍ່):**

**11** *ພະເຍຊູ*

**12** *ກ. ຈິດ ຂ. ມັດທາຍ 9:2*

**13** *ກ. ມາຖິ້ມໃຈເກົ່າເອົາໃຈໃໝ່ ຂ. ຈິດວິນຍານ ຄ. ທີ່ພະເຍຊູຊົງໂຜດຄົນເປ້ຍ*

**14** *ຮັກ*

**15** *ລິດເດດ*

**16** *ພະເຈົ້າ*

**17** *ກ. ຮັກ... ພະເຈົ້າ ຂ. ເດດ... ພະເຈົ້າ*

**18** *ຄ ຖືກ*

**19** *ກ. ຄວາມຮັກ... ພະເຍຊູ ຂ. ລິດເດດ... ພະເຍຊູ ຄ. ຄຳປະກາດພະທຳ*

**20** *ກ. ເພາະເຂົາບໍ່ມີຄວາມເຊື່ອ ຂ. ເພາະເຂົາມີຄວາມເຊື່ອນ້ອຍ*

**21** *ຂາດຄວາມເຊື່ອ*

**22** *ກ. ຄົນຍົກອອກ ຂ. ຄົນແກ້ໄປ ຄ. ພະເຍຊູ*

**23** *ກ. ຄວາມເຊື່ອ ຂ. ເທື່ອໃດທີ່ບໍ່ຈຳເປັນ*

**24** *ກ ຖືກ*

**25** *ກ. ຄວາມຮັກຂອງພະເຍຊູ ຂ. ລິດເດດຂອງພະເຍຊູ*
*ຄ. ຢືນຢັນຄຳປະກາດພະທຳ*

**26** *ເຈັບໄຂ້ໄດ້ປ່ວຍ... ເຖົ້າແກ່... ອ້ອນວອນ... ນ້ຳມັນ... ອົງພະຜູ້ເປັນເຈົ້າ.*

**27** *ຂ ຖືກ*

**28** *ກ. ສາລະພາບຜິດບາບຂອງຕົນ ຂ. ອ້ອນວອນ*

**29** *ນ້ຳມັນ*

**30** *ຢາໂກໂບ 5:14*

**31** *ກ. ຈົ່ງສາລະພາບຜິດບາບຂອງຕົນຕໍ່ກັນແລະກັນ ຂ. ຈົ່ງອ້ອນວອນເພື່ອກັນແລະກັນ*

**32** *ກ. ສາລະພາບຜິດບາບຂອງຕົນຕໍ່ອ້ອນວອນເພື່ອ ຂ. ຄວາມເຊື່ອ*

**33** *ກ. ຄວາມເຊື່ອ ຂ. ຈຳເປັນ*

**34** *ກ. ພະເຈົ້າ ຂ. ພະເຈົ້າ*
*ຄ. (ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ)*

**35** *ກ. ຄວາມຮັກຂອງພະເຈົ້າ ຂ. ລິດເດດຂອງພະເຈົ້າ*
*ຄ. ຢືນຢັນຄຳປະກາດພະທຳ*

**36** *ກ. ຄວາມຮັກຂອງພະເຈົ້າ ຂ. ລິດເດດຂອງພະເຈົ້າ*
*ຄ. ຢືນຢັນຄຳປະກາດພະທຳ*

**37** *(ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມ)*